**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 0583 / ຫກ

ນະຄອນຫຼວງວຽງຈັນ, ວັນທີ 02 ມີນາ 2026

# ແຈ້ງການ

**ເຖິງ:** - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ.

- ທ່ານປະທານສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດລາວ.
- ທ່ານຜູ້ອຳນວຍການບໍລິສັດນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ.
- ທ່ານຜູ້ອຳນວຍການບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ.
- ປ້ຳນ້ຳມັນເຊື້ອໄຟ

**ເລື່ອງ:** ການສະໜອງນ້ຳມັນເຊື້ອໄຟ ໃນຊ່ວງໄລຍະຄວາມບໍ່ສະຫງົບໃນພາກພື້ນຕາເວັນອອກກາງ.

- ອີງຕາມ ດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 559/ລບ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ສະພາບຄວາມບໍ່ສະຫງົບຂອງພາກພື້ນຕາເວັນອອກກາງໃນປັດຈຸບັນ.

**ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອປະຕິບັດດັ່ງນີ້:**

1. ບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ແລະ ບໍລິສັດຈຳໜ່າຍພາຍໃນ ຕ້ອງລາຍງານແຜນການນຳເຂົ້າ-ການສະໜອງນ້ຳມັນເຊື້ອໄຟປະຈຳວັນ ສົ່ງໃຫ້ກົມການຄ້າພາຍໃນ ກ່ອນເວລາ 16:00 ໂມງ ຂອງທຸກໆວັນ;

2. ບໍລິສັດນຳເຂົ້າ-ສົ່ງອອກ ແລະ ບໍລິສັດຈຳໜ່າຍ ນ້ຳມັນເຊື້ອໄຟ ພາຍໃນປະເທດ ຕ້ອງຮັບປະກັນ ການສະໜອງນ້ຳມັນເຊື້ອໄຟ ໂດຍຕ້ອງໃຫ້ບຸລິມະສິດການສະໜອງໃຫ້ປ້ຳບໍລິສັດລົງທຶນ ແລະ ປ້ຳຕົວແທນ ກ່ອນ ເພື່ອຮັບໃຊ້ສັງຄົມ ຢ່າງປົກກະຕິ;

3. ບໍລິສັດ ຕ້ອງເປັນເຈົ້າການຄຸ້ມຄອງປ້ຳບໍລິສັດລົງທຶນ ແລະ ປ້ຳຕົວແທນ ບໍ່ໃຫ້ຂາຍນ້ຳມັນເຊື້ອໄຟໃສ່ກະຕຸກ ຫຼື ຖັງບັນຈຸ ທຸກປະເພດ ໃນຂະໜາດບໍລິມາດ 5 ລິດຂຶ້ນໄປໂດຍເດັດຂາດ ແລະ ເປີດບໍລິການ ເປັນປົກກະຕິ ກໍລະນີປິດ ຫຼື ຢຸດໃຫ້ບໍລິການຊົ່ວຄາວ ຕ້ອງແຈ້ງເຫດຜົນໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ບ່ອນທີ່ປ້ຳຕັ້ງຢູ່ ຕ້ອງຕິດປ້າຍໃຫ້ຜູ້ຊົມໃຊ້ຊາບກ່ອນ 03 ວັນ;

4. ການສະໜອງນໍ້າມັນເຊື້ອໄຟ ໃຫ້ບັນດາໂຄງການ ບໍລິສັດ ຕ້ອງສະໜອງຂໍ້ມູນສັນຍາຊື້-ຂາຍ ໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຊາບກ່ອນ ເພື່ອຕິດຕາມກວດກາ;

5. ຫ້າມກັກຕຸນນໍ້າມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ ຫຼື ປະຕິເສດການສະໜອງນໍ້າມັນເຊື້ອໄຟໂດຍບໍ່ມີເຫດຜົນ; ຫາກກວດພົບ ຈະຖືກປັບໃໝມາດຕະການຢ່າງເຂັ້ມງວດ ກໍລະນີປະຕິເສດການສະໜອງ.

6. ຫາກພົບເຫັນການສະໜອງນໍ້າມັນເຊື້ອໄຟໃຫ້ແກ່ ປໍ້ານໍ້າມັນເຊື້ອໄຟທີ່ບໍ່ແມ່ນປໍ້າຕົວແທນ ແລະ ບໍລິສັດ/ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ, ການກັກຕຸນນໍ້າມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ປັ່ນປ່ວນຕະຫຼາດ, ປິດປໍ້າຊົ່ວຄາວ ຫຼື ປິດຖາວອນ ໂດຍບໍ່ມີເຫດຜົນ ແລະ ພຶດຕິກຳອື່ນໆທີ່ລະເມີດຂໍ້ຫ້າມ ຕາມດຳລັດ 559/ລບ ແມ່ນໃຫ້ປະຕິບັດຕາມລະບຽບການຢ່າງເຂັ້ມງວດ;

7. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ນະຄອນ ເປັນເຈົ້າການໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ຫ້ອງການ

ປອ. ບົວວັນ ວິລະວົງ